ສາຂາ ທະນາຄານແຫ່ງ ສປປ ລາວ ພາກໃຕ້
BANK OF THE LAO P.D.R SOUTHERN REGION



ຖະໜົນແຄມຂອງ, ບ້ານພັດທະນາຫຼັກເມືອງ, ນະຄອນປາກເຊ, ແຂວງ ຈຳປາສັກ, 031 214 129, https://www.bol.gov.la/champasak

# ກອງປະຊຸມສະຫຼຸບການຈັດຕັ້ງປະຕິບັດ ນະໂຍບາຍສິນເຊື່ອ ເພື່ອກະຈາຍແຫຼ່ງທຶນສູ່ທ້ອງຖິ່ນ ຂອງແຂວງຈຳປາສັກ ປະຈຳປີ 2023-2025




ໃນຕອນເຊົ້າຂອງວັນທີ 03 ກຸມພາ 2026 ທີ່ ຫ້ອງປະຊຸມປາກເຊ, ທະນາຄານແຫ່ງ ສປປ ລາວ ປະຈຳພາກໃຕ້ ໄດ້ມີກອງປະຊຸມກອງປະຊຸມສະຫຼຸບການຈັດຕັ້ງປະຕິບັດນະໂຍບາຍສິນເຊື່ອ ເພື່ອກະຈາຍແຫຼ່ງທຶນສູ່ທ້ອງຖິ່ນຂອງແຂວງຈຳປາສັກ ປະຈຳປີ 2023-2025. ໂດຍການໃຫ້ກຽດເຂົ້າຮ່ວມເປັນປະທານຂອງ ທ່ານ ພິມພອນ ພັນດານຸວົງ ຮອງປະທານຄະນະກຳມະການປົກຄອງ ແຂວງຈຳປາສັກ, ຫົວໜ້າຄະນະຮັບຜິດຊອບຈັດຕັ້ງປະຕິບັດນະໂຍບາຍສິນເຊື່ອ, ເຂົ້າຮ່ວມມີ ທ່ານ ຄອນສະຫວັນ ສິງສະຫວັນ ຮອງຫົວໜ້າ ທຫລ ປະຈຳພາກໃຕ້; ພ້ອມນີ້, ກໍ່ມີຄະນະຮັບຜິດຊອບຈັດຕັ້ງປະຕິບັດນະໂຍບາຍສິນເຊື່ອເພື່ອກະຈາຍແຫຼ່ງທຶນສູ່ທ້ອງຖິ່ນຂັ້ນແຂວງ, ຕາງໜ້າທະນາຄານທຸລະກິດ ທີ່ເຂົ້າຮ່ວມໂຄງການນະໂຍບາຍສິນເຊື່ອ ເຂົ້າຮ່ວມທັງໝົດ 31 ທ່ານ, ຍິງ 06 ທ່ານ.




ໃນວາລະກອງປະຊຸມ ທ່ານ ໂພໄຊ ມະຫາລາດ ຫົວໜ້າພະແນກຄຸ້ມຄອງສະຖາບັນການເງິນ, ທຫລ ປະຈຳພາກໃຕ້ ໄດ້ຜ່ານບົດສະຫຼຸບການຈັດຕັ້ງປະຕິບັດນະໂຍບາຍສິນເຊື່ອເພື່ອກະຈາຍແຫຼ່ງທຶນສູ່ທ້ອງຖິ່ນ ຂອງແຂວງຈຳປາສັກ ປະຈຳປີ 2023-2025, ຊຶ່ງນັບແຕ່ມື້ເລີ່ມຈັດຕັ້ງປະຕິບັດ ໃນເດືອນກັນຍາ ປີ 2023 ຫາເດືອນທັນວາ ປີ 2025 ໄດ້ມີການອະນຸມັດແຫຼ່ງທຶນຕົວຈິງ ຈຳນວນ 112 ຫົວໜ່ວຍ ລວມວົງເງິນກູ້ 201.71 ຕື້ກີບ (ປະຕິບັດໄດ້ 67.24% ຂອງແຜນການ) ແລະ ໄດ້ເບີກຖອນການນຳໃຊ້ເງິນກູ້ໝົດແລ້ວ. ໃນນັ້ນ, ຂະແໜງກະສິກຳ-ປ່າໄມ້ ຈຳນວນ 60 ຫົວໜ່ວຍ, ລວມວົງເງິນກູ້ 127.16 ຕື້ກີບ, ກວມເອົາ 63.04%, ຂະແໜງບໍລິການ-ທ່ອງທ່ຽວ ແລະ ການຄ້າ ຈຳນວນ 44 ຫົວໜ່ວຍ, ລວມວົງເງິນກູ້ 68.45 ຕື້ກີບ, ກວມເອົາ 33.93% ແລະ ຂະແໜງອຸດສາຫະກຳ-ຫັດຖະກຳ ຈຳນວນ 08 ຫົວໜ່ວຍ, ລວມວົງເງິນກູ້ 6.10 ຕື້ກີບ, ກວມເອົາ 3.02% ຂອງຍອດອະນຸມັດ. ໂດຍທະນາຄານ ທີ່ໄດ້ຮັບແຫຼ່ງທຶນຫຼາຍກວ່າໝູ່ ໄດ້ແກ່ ທະນາຄານຮ່ວມພັດທະນາ ກວມເອົາ 47.87%, ທະນາຄານສົ່ງເສີມກະສິກຳ ກວມເອົາ 36.98%, ທະນາຄານພົງສະຫວັນ ກວມເອົາ 8.20% , ທະນາຄານການຄ້າຕ່າງປະເທດລາວ ມະຫາຊົນ ກວມເອົາ 2.78%, ທະນາຄານພັດທະນາລາວ ກວມເອົາ 2.48% ແລະ ທະນາຄານອິນໂດຈີນ ກວມເອົາ 1.69%.

ຕອນທ້າຍກອງປະຊຸມ ໄດ້ເປີດໂອກາດໃຫ້ບັນດາຄະນະຮັບຜິດຊອບຈັດຕັ້ງປະຕິບັດນະໂຍບາຍສິນເຊື່ອເພື່ອກະຈາຍແຫຼ່ງທຶນສູ່ທ້ອງຖິ່ນຂັ້ນແຂວງ, ຕາງໜ້າທະນາຄານທຸລະກິດ ໄດ້ລາຍງານໂດຍຫຍໍ້ ຖືງຂໍ້ສະດວກ, ຂໍ້ຫຍຸ້ງຍາກ ພ້ອມທັງ ປຶກສາຫາລື, ແລກປ່ຽນຄຳເຫັນ ກ່ຽວກັບການຈັດຕັ້ງປະຕິບັດນະໂຍບາຍສິນເຊື່ອໃນໄລຍະຜ່ານມາ; ໂອກາດດັ່ງກ່າວ, ທ່ານ ຮອງປະທານຄະນະກຳມະການປົກຄອງ ແຂວງຈຳປາສັກ ກໍ່ໄດ້ໃຫ້ທິດຊີ້ນຳ ເພື່ອນຳໄປຜັນຂະຫຍາຍ, ຊຸກຍູ້ວຽກງານດັ່ງກ່າວ ໃຫ້ເກີດປະໂຫຍດສູງສຸດ ແລະ ບັນລຸຕາມເປົ້າໝາຍທີ່ກຳນົດໄວ້.